**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ກົມຄຸ້ມຄອງຊັບສິນແຫ່ງລັດ

ເລກທີ 3499 /ຄຊລ

ນະຄອນຫຼວງວຽງຈັນ, ວັນທີ 08 ສິງຫາ 2023

## ໜັງສືເຊີນ

**ຮຽນ:** ທ່ານ ..............................................................................................

**ເລື່ອງ:** ເຂົ້າຮ່ວມກອງປະຊຸມວິຊາການກ່ຽວກັບການຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດ ແລະ ເພື່ອແກ້ໄຂບັນຫາຄົງຄ້າງໃນການຈັດຕັ້ງປະຕິບັດກ່ຽວກັບການນໍາໃຊ້ເວບໄຊຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ສະບັບເລກທີ 18/ສພຊ, ລົງວັນທີ 07 ກໍລະກົດ 2022.
- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 6199/ກງ, ລົງວັນທີ 16 ທັນວາ 2022.
- ອີງຕາມ ບົດບັນທຶກກອງປະຊຸມການຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດ ແລະ ການແກ້ໄຂຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດກ່ຽວກັບການນໍາໃຊ້ເວບໄຊການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຖັ້ງວັນທີ 30 ມິຖຸນາ 2023;

ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ຂໍຖືເປັນກຽດຮຽນເຊີນມາຍັງທ່ານ ເພື່ອເຂົ້າຮ່ວມກອງປະຊຸມວິຊາການກ່ຽວກັບການຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດ ແລະ ແກ້ໄຂບັນຫາແກ້ໄຂບັນຫາຄົງຄ້າງໃນການຈັດຕັ້ງປະຕິບັດກ່ຽວກັບການນໍາໃຊ້ເວບໄຊຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ. ຊຶ່ງເປົ້າໝາຍຜູ້ເຂົ້າຮ່ວມແມ່ນຕ່າງໜ້າຈາກບັນດາກະຊວງ ທີ່ໄດ້ເຂົ້າຮ່ວມຄັ້ງວັນທີ 30 ມິຖຸນາ 2023 (ມີໃບລົງທະບຽນຄັດຕິດ)

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 11 ສິງຫາ 2023; ເວລາ: 09:00-12:00 ໂມງ. ທີ່ຫ້ອງປະຊຸມຂອງທະນາຄານໂລກ (ຊັ້ນ G) **ໂດຍການເປັນປະທານຮ່ວມ ລະຫວ່າງ ທ່ານ ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ແລະ ທ່ານ ຫົວໜ້າຫ້ອງການທະນາຄານໂລກປະຈໍາ ສປປລາວ.**

ດັ່ງນັ້ນ, ຈຶ່ງຮຽນເຊີນມາຍັງທ່ານ ເຂົ້າຮ່ວມກອງປະຊຸມຕາມ ວັນ ແລະ ເວລາ ດັ່ງກ່າວດ້ວຍ.

**ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ**

ກະຊວງການເງິນ ★ ກົມຄຸ້ມຄອງຊັບສິນແຫ່ງລັດ

ພຸດທະສິນ ເຮືອງທະວົງ

Mr.Phouthasinh HEANGTHAVONG

ຕິດຕໍ່ພົວພັນ: ໂທ: 021 263252

020 52979966 020 59994199